# ຄຳຖາມ & ຄຳຕອບ

**ຄຳຖາມ.** ເປັນຫຍັງຈຶ່ງມີການປະເມີນຜົນຫລາຍແນວ?

**ຄຳຕອບ.** WAC 388-310-1450 ກ່າວໄວ້ວ່າພໍ່ແມ່ຜູ້ທີ່ຢູ່ໃນແນວທາງການຖືພາໄປສູ່ວຽກງານຕ້ອງເຂົ້າຮ່ວມໃນການປະເມີນຜົນນຳພະນັກງານສັງຄົມຂອງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກເພື່ອຈະພິຈາຣະນາເບິ່ງວ່າກິຈກັມແນວໃດທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານໄດ້ດີທີ່ສຸດ. ການປະເມີນຜົນເຫລົ່ານີ້ຈະຖືກເຮັດໃນຣະຫວ່າງຈຸດຕ່າງໆໃນການຖືພາ (ເມື່ອເວລາກົມໄດ້ພົບວ່າທ່ານຖືພາຫລືມີລູກນ້ອຍອາຍຸຕ່ຳກ່ວານຶ່ງປີ ແລະ ຫລັງຈາກກຳເນີດ) ເພື່ອຈະຊີ້ບອກການປ່ຽນແປງຕ່າງໆຢູ່ໃນສະພາບການຂອງຄອບຄົວຂອງທ່ານ ແລະ ໃຫ້ແນ່ໃຈວ່າກິຈກັມຕ່າງໆທີ່ຕ້ອງໄດ້ເຮັດຢູ່ຍັງຄົງເຫມາະສົມຢູ່. ຕົວຢ່າງວ່າ, ຄວາມຕ້ອງການຂອງທ່ານໃນຣະຫວ່າງໄຕຣມາດທີສາມອາດຈະແຕກຕ່າງຫລາຍຈາກຄວາມຕ້ອງການຂອງທ່ານຫລັງຈາກທີ່ລູກນ້ອຍຂອງທ່ານໄດ້ເກີດແລ້ວ. ພວກເຮົາຕ້ອງການໃຫ້ ແນ່ໃຈວ່າກົດກຳນົດ WorkFirst ຂອງທ່ານຈະດຳເນີນທີ່ຈະຕອບສະນອງຄວາມຕ້ອງການຂອງທ່ານຕໍ່ໄປ.

**ຄຳຖາມ.** ຈະມີຫຍັງເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ເຂົ້າຮ່ວມໃນຫມາຍນັດການປະເມີນຜົນ?

**ຄຳຕອບ.** ຖ້າຫາກວ່າທ່ານບໍ່ເຂົ້າຮ່ວມໃນການປະເມີນຜົນ, ພວກເຮົາຈະດຳເນີນການເຣື່ອງເຫດຜົນດີເພື່ອຈະພິຈາຣະນາເບິ່ງວ່າທ່ານມີເຫດຜົນດີຫລືບໍ່ສຳລັບການບໍ່ເຂົ້າຮ່ວມ. ຖ້າຫາກວ່າທ່ານບໍ່ມີເຫດຜົນດີ, ທ່ານຈະຖືກລົງໂທດ ແລະ ການຊ່ວຍເຫລືອເງິນສົດ Workfirst ຂອງທ່ານຈະຖືກລຸດລົງ.

**ຄຳຖາມ.** ຂ້າພະເຈົ້າເປັນຄົນດຽວບໍ່ທີ່ຖືກບົ່ງໃຫ້ເຂົ້າຮ່ວມໃນການປະເມີນຜົນ?

**ຄຳຕອບ.** ພໍ່ແມ່ແຕ່ລະຄົນທີ່ກຳລັງໄດ້ຮັບເງິນສົດຊ່ວຍເຫລືອ TANF ຢູ່ຕ້ອງເຂົ້າຮ່ວມໃນການປະເມີນຜົນເພື່ອຈະຊີ້ບອກຄວາມຕ້ອງການຂອງຄອບຄົວ. ກົດຣະບຽບຂອງການເຂົ້າຮ່ວມໃນໂຄງການຽໂຣກຟີຣຊທຈະຖືກອີງໃສ່ຜົນອອກມາຂອງການປະເມີນຜົນອັນນີ້.ຖ້າຫາກວ່າພໍ່ແມ່ທັງສອງຄົນຢູ່ໃນເຮືອນ, ພໍ່ແ ມ່ຄົນໃດຄົນນຶ່ງ (ແຕ່ວ່າບໍ່ແມ່ນທັງສອງ) ຈະເອົາການຍົກເວັ້ນຂອງເດັກທາຣົກໄດ້ໃນທຸກໆເວລາ.

**ຄຳຖາມ.** ຂ້າພະເຈົ້າຈະຮູ້ຈັກໄດ້ແນວໃດວ່າມັນຮອດເວລາແລ້ວທີ່ຈະເຮັດການປະເມີນຜົນ?

**ຄຳຕອບ.** ຢູ່ໃນກໍຣະນີສ່ວນຫລາຍ, ພະນັກງານສັງຄົມຫລືຜູ້ກຳກັບເອກສານຂອງທ່ານຈະສົ່ງຫນັງສືຫມາຍນັດພົບໄປໃຫ້ທ່ານ. ຖ້າຫາກວ່າທ່ານບໍ່ສາມາດເຂົ້າມາຫ້ອງການໄດ້, ເຂົາເຈົ້າອາດຈະສາມາດພົບກັບທ່ານໄດ້ຢູ່ເຮືອນຂອງທ່ານຫລືເຮັດການປະເມີນຜົນໄດ້ທາງໂທຣະສັບ. ຈົ່ງຕິດຕໍ່ໄປຫາພະນັກງານສັງຄົມຂອງທ່ານເພື່ອຮາຍລະອຽດເພີ້ມເຕີມກ່ຽວກັບທາງເລືອກເຫລົ່ານີ້.



ຜູ້ຈັດການເອກສານ WorkFirst ____________________

ໂທຣະສັບ____________________

ພະນັກງານສັງຄົມ WorkFirst____________________

ໂທຣະສັບ____________________

Washington State
Department of Social & Health Services
*Transforming lives*

DSHS 22-1262 LA (Rev. 7/15)

# ແນວທາງການ ຖືພາໄປສູ່ ວຽກງານ



ຂ້າພະເຈົ້າສາມາດຄາດຫມາຍແນວໃດແດ່ເມື່ອເວລາຂ້າພະເຈົ້າເປັນພາກສ່ວນນຶ່ງຂອງແນວທາງການຖືພາໄປສູ່ວຽກງານ?



## ແມ່ນໃຜແດ່ເປັນພາກສ່ວນຂອງແນວທາງສໍາລັບການຖືພາໄປສູ່ວຽກງານ?

ທ່ານເປັນພາກສ່ວນຂອງແນວທາງສໍາລັບການຖືພາໄປສູ່ວຽກງານຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອເງິນ TANF (ການຊ່ວຍເຫລືອຊົ່ວຄາວສໍາລັບຄອບຄົວຂັດສົນ) ແລະ ທ່ານຖືພາຫລືເບິ່ງແຍງລູກນ້ອຍອາຍຸຕໍ່າກວ່າ 12 ເດືອນ.

## ຈຸດມຸ່ງຫມາຍຂອງແນວທາງສໍາລັບການຖືພາໄປສູ່ວຽກງານແມ່ນຫຍັງ?

### *ກໍ່ສ້າງຄອບຄົວທີ່ອຸດົມສົມບູນ*

ຊ່ວຍເຫລືອຄອບຄົວໃຫ້ເຂົ້າສ່ວນນໍາກິດຈະກໍາຂອງໂຄງການ WorkFirst ໂດຍການຊ່ວຍເຫລືອເຂົາເຈົ້າໃຫ້ສະນອງຄວາມຕ້ອງການຂອງຄອບຄົວດ້ານພະຍາບານ ແລະ ຢ່າງອື່ນ.

### *ຊ່ວຍເຫລືອຄອບຄົວເພື່ອຈະກາຍເປັນກຸ້ມຕົນເອງ*

ມັນມີຂັ້ນຕອນຫລາຍໆຂັ້ນຢູ່ໃນແນວທາງການຖືພາໄປສູ່ວຽກງານ. ທ່ານອາດຈະໄດ້ຜ່ານຫມົດທຸກຂັ້ນຫລືພຽງແຕ່ບາງຂັ້ນເທົ່ານັ້ນ. ມັນຈະຂຶ້ນກັບການຖືພາຂອງທ່ານທີ່ທ່ານຢູ່ໃນລະດັບຂັ້ນໃດ.

ຖ້າຫາກວ່າທ່ານເປັນຄົນໃຫມ່ສໍາລັບໂຄງການ TANF, ຂັ້ນທໍາອິດຂອງທ່ານຈະແມ່ນ *ການດໍາເນີນການຕີຣາຄາເບິ່ງອັນຖ້ວນທີ່.*

### *ການຕີຣາຄາປະເມີນຜົນເບິ່ງການຖືພາໄປສູ່ວຽກງານ*

ຂັ້ນຕໍ່ໄປຂອງທ່ານແມ່ນທີ່ຈະເຂົ້າຮ່ວມ ແລະ ເຮັດການປະເມີນຜົນເບິ່ງການຖືພາໄປສູ່ວຽກງານໃຫ້ແລ້ວນໍາພະນັກງານສັງຄົມຂອງ WorkFirst.

ການປະເມີນຜົນເບິ່ງຈະ:

- ຊີ້ບອກຄວາມຕ້ອງການ, ຄວາມເຂັ້ມແຂງ ແລະ ສິ່ງກີດກັ້ນທີ່ອາດເປັນໄປໄດ້ຂອງຄອບຄົວຂອງທ່ານ
- ຊີ້ບອກການບໍຣິການທີ່ທ່ານອາດຈະມີສິດໄດ້ຮັບໃນຂະນະທີ່ທ່ານຢູ່ໃນແນວທາງການຖືພາໄປສູ່ວຽກງານ
- ພິຈາຣະນາເບິ່ງການເຂົ້າຮ່ວມທີ່ຕ້ອງເຮັດຂອງທ່ານ ແລະ ຊີ້ບອກກິຈກັມຂອງໂຄງການ WorkFirst ອັນເຫມາະສົມ



### ການເຂົ້າຮ່ວມນໍາໂຄງການຣະຫວ່າງການຖືພາໃນໄຕຣມາດທີນຶ່ງ ແລະ ທີສອງ

ຖ້າຫາກວ່າທ່ານຢູ່ໃນໄຕຣມາດທີນຶ່ງຫລືສອງ (ສາມຫາຫົກເດືອນ) ຂອງການຖືພາຂອງທ່ານ, ທ່ານຈະຖືກບົ່ງໃຫ້ເຂົ້າຮ່ວມເຕັມເວລາຫລືໃກ້ເຕັມເວລາເທົ່າທີ່ສາມາດເຮັດໄດ້ໃນກິຈກັມຂອງໂຄງການ WorkFirst. ການເຂົ້າຮ່ວມເຕັມເວລາ ແມ່ນ 32-40 ຊົ່ວໂມງຕໍ່ອາທິດ.

ຜົນອອກມາຂອງການຕີຣາຄາອັນຖ້ວນທີ່ ແລະ ການປະເມີນຜົນໃນການຖືພາໄປສູ່ວຽກງານຈະພິຈາຣະນາບອກວ່າທ່ານຕ້ອງໄດ້ເຂົ້າຮ່ວມຫລາຍເທົ່າໃດ.

### ການເຂົ້າຮ່ວມນໍາໂຄງການ WorkFirst ໃນໄຕຣມາດທີສາມ

ອີງຕາມຜົນອອກມາຂອງການປະເມີນຜົນຂອງທ່ານ, ພວກເຮົາຈະພິຈາຣະນາຊີ້ບອກວ່າທ່ານຈະຕ້ອງເປັນ ຫລື ບໍ່:



- ຜູ້ເຂົ້າຮ່ວມຂອງໂຄງການ WorkFirst ຕາມສະມັກໃຈ ຫລື
- ຜູ້ເຂົ້າຮ່ວມຂອງໂຄງການ WorkFirst ທີ່ຕ້ອງເປັນ ຫລື
- ມີເງື່ອນໄຂທີ່ຈະເລືອກທີ່ຈະບໍ່ເຂົ້າຮ່ວມໃນກິຈກັມຂອງໂຄງການWorkFirst.

### ການເຂົ້າຮ່ວມນໍາໂຄງການ WorkFirst ສໍາລັບພໍ່ແມ່ທີ່ມີລູກນ້ອຍແຕ່ກໍາເນີດໄປຮອດ 12 ເດືອນ

ຫລັງຈາກລູກນ້ອຍຂອງທ່ານໄດ້ເກີດແລ້ວ, ທ່ານຕ້ອງເຮັດການປະເມີນຜົນການຖືພາໄປສູ່ວຽກງານໃຫ້ແລ້ວ.

ການປະເມີນຜົນຈະພິຈາຣະນາບອກຣະດັບຂອງການເຂົ້າຮ່ວມນໍາໂຄງການ WorkFirst ຂອງທ່ານ.ທ່ານອາດຈະ:

- ຖືກຖືວ່າເປັນຜູ້ເຂົ້າຮ່ວມຂອງໂຄງການ WorkFirst ຕາມສະມັກໃຈ
- ຖືກຖືວ່າເປັນຜູ້ເຂົ້າຮ່ວມຂອງໂຄງການ WorkFirst ທີ່ຕ້ອງເປັນ
- ສາມາດເລືອກເອົາການຍົກເວັ້ນຂອງເດັກທາຣົກ (ທ່ານຈະໃຊ້ການຍົກເວັ້ນອັນນີ້ໄດ້ຮອດ 365 ວັນ, ຫລື 12 ເດືອນໃນຕລອດຊີວິດຂອງທ່ານ, ກ່ອນວັນເກີດປີທໍາອິດຂອງລູກນ້ອຍຂອງທ່ານ.)

ຖ້າຫາກວ່າທ່ານມີສິດໃນການຍົກເວັ້ນຂອງເດັກທາຣົກ, ທ່ານຈະເລືອກທີ່ຈະບໍ່ເຂົ້າຮ່ວມໃນກິຈກັມຂອງ WorkFirst ໄດ້. ເພື່ອຈະມີສິດໄດ້ຮັບ, ທ່ານຕ້ອງໄດ້ເຂົ້າຮ່ວມໃນການປະເມີນຜົນທີ່ຕ້ອງໄດ້ເຮັດ.

### WAC 388-310-1450

ທ່ານອາດຈະປະເຊີນຫນ້ານໍາການປັບໃຫມລົງໂທດໃນຣະຫວ່າງເວລາສ່ວນນຶ່ງຂອງການຖືພາຂອງທ່ານຫລືຫລັງຈາກທີ່ລູກຂອງທ່ານເກີດແລ້ວຖ້າຫາກວ່າທ່ານບໍ່ເຂົ້າຮ່ວມນໍາໃນການປະເມີນຜົນການຖືພາໄປສູ່ວຽກງານທີ່ຕ້ອງໄດ້ເຮັດທຸກໆຢ່າງຫລືຖ້າຫາກວ່າການປະເມີນຜົນເຫລົ່ານັ້ນຊີ້ບອກວ່າທ່ານເປັນຜູ້ເຂົ້າຮ່ວມຕ້ອງເປັນໃນກິຈກັມຂອງ WorkFirst ແລະ ທ່ານບໍ່ເຂົ້າຮ່ວມນໍາ.

ຈຸດເປົ້າຫມາຍຂອງພວກເຮົາແມ່ນເພື່ອຈະກໍ່ສ້າງຄອບຄົວທີ່ອຸດົມສົມບູນ, ບໍ່ແມ່ນຈະລົງໂທດເຂົາເຈົ້າ, ແຕ່ວ່າທ່ານຕ້ອງໄດ້ເຮັດສ່ວນຂອງທ່ານ ແລະ ເຂົ້າຮ່ວມໃນແນວທາງສໍາລັບການຖືພາໄປສູ່ວຽກງານຕາມທີ່ຕ້ອງໄດ້ເຮັດ.